I.7

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1776 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 28 AUG 2012

ແຈ້ງການ

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ອຳນວຍຄວາມສະດວກການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ.

- ອີງຕາມ ດຳລັດ ເລກທີ 522/ນຍ, ລົງວັນທີ 23/12/2011, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ແຈ້ງການຂອງຫ້ອງການລັດຖະບານ ກ່ຽວກັບການຜັນຂະຫຍາຍຜົນກອງປະຊຸມເຜີຍແຜ່ບົດບັນທຶກ ກ່ຽວກັບຂໍ້ກຳນົດເງື່ອນໄຂການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ, ສະບັບເລກທີ 1422/ຫລບ, ລົງວັນທີ 01/8/2012.

ເພື່ອຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການທຸລະກິດການສົ່ງອອກໝາກສາລີ ຂອງ ສປປ ລາວ ໄປ ສປ ຈີນ ແລະ ຮັບປະກັນບໍ່ໃຫ້ມີສິ່ງກີດຂວາງທີ່ເປັນອຸບປະສັກຕໍ່ການຈໍລະຈອນຂົນສົ່ງສິນຄ້າຢູ່ພາຍ ໃນ, ການນຳເຂົ້າ ແລະ ສົ່ງອອກສິນຄ້າ ເພື່ອໃຫ້ມະຕິຕົກລົງຂອງລັດຖະບານ ແລະ ຄຳສັ່ງແນະນຳກ່ຽວກັບການລົບ ລ້າງສິ່ງກີດຂວາງທີ່ເປັນອຸບປະສັກຕໍ່ການຈໍລະຈອນສິນຄ້າໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ປະຕິບັດ ດັ່ງນີ້:

1. ໃຫ້ອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກສາລີ ສປປ ລາວ ໄປ ສປ ຈີນ, ໂດຍຊ່ວຍຜູ້ປະກອບການ ທຸລະກິດສົ່ງອອກໝາກສາລີ ໃຫ້ປະຕິບັດຢ່າງເຂັ້ມງວດ ຕາມຂັ້ນຕອນຕ່າງໆຂອງບົດບັນທຶກຂໍ້ກຳນົດເງື່ອນ ໄຂການກວດກາສັດຕູພືດສາລີ ກ່ອນການນຳເຂົ້າ ສປ ຈີນ, ສະບັບລົງວັນທີ 10 ມັງກອນ 2012;
2. ເອກະສານໃດທີ່ປະເທດນຳເຂົ້າບໍ່ຕ້ອງການກໍໃຫ້ຕັດອອກ;
3. ໃຫ້ລົບລ້າງ ແລະ ຍຸດຕິການອອກໃບເຄື່ອນຍ້າຍສິນຄ້າທຸກປະເພດ ໂດຍສະເພາະແມ່ນໃບເຄື່ອນຍ້າຍສິນ ຄ້າປະເພດໝາກສາລີ;
4. ໃຫ້ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງຊ່ວຍດ້ານການຕະຫຼາດກັບ ສປ ຈີນ;
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງພາຍໃນແຂວງ ເພື່ອພິຈາລະນາຄົ້ນຄວ້າຈັດຕັ້ງກຸ່ມ ຫຼື ສະມາຄົມ ຜູ້ຜະລິດ ຫຼື ສົ່ງອອກສາລີ ເພື່ອໃຫ້ຜູ້ປະກອບການດ້ານນີ້ມີຄວາມເຂັ້ມແຂງ, ມີອຳນາດຕໍ່ລອງດ້ານຕ່າງໆ ແລະ ຊ່ວຍກັນເຮັດໄດ້ຕາມມາດຖານເງື່ອນໄຂຂອງການສົ່ງອອກສາລີ ຕາມທີ່ໄດ້ຖືກກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ;

ສະແຫວງ ສີທາ